ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------

ກະຊວງ ສາທາລະນະສຸກ ເລກທີ 062/ກຊສ

ນະຄອນຫຼວງວຽງຈັນ, ວັນທີ 30 DEC 2007

## ຂໍ້ຕົກລົງ ຂອງ ລັດຖະມົນຕີ ວ່າການ ກະຊວງ ສາທາລະນະສຸກ ວ່າດ້ວຍ ບັນດາຫຼັກການທີ່ຄຸ້ມຄອງ ສະຖາບັນ ປັດສະເຕີ ລາວ

- ອີງຕາມ ກົດໝາຍ ເລກທີ 02/ສພຊ ວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ດຳລັດ ເລກທີ 020/ນຍ ກ່ຽວກັບ ພາລະບົດບາດ ສິດ ແລະ ໜ້າທີ່ ຂອງ ກະຊວງ ສາທາລະນະສຸກ ແຫ່ງ ສປປ ລາວ ລົງວັນທີ 19 ມີນາ 1999;
- ອີງຕາມ ອະນຸສັນຍາ ເຊັນກັນ ລະຫວ່າງ ກະຊວງ ສາທາລະນະສຸກ ແຫ່ງ ສປປ ລາວ ກັບສະຖາບັນ ປັດສະເຕີ ລົງວັນທີ 16 ມິຖຸນາ 2006;
- ອີງຕາມ ສັນຍາການຮ່ວມມືທົ່ວໄປ ເຊັນກັນ ລະຫວ່າງ ກະຊວງ ສາທາລະນະສຸກ ແລະ ສະຖາບັນ ປັດສະເຕີ ໃນວັນທີ 30 ພະຈິກ 2006;
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ. 402/ນຍ ວ່າດ້ວຍ ການສ້າງຕັ້ງ ສະຖາບັນ ປັດສະເຕີ ລາວ ລົງວັນທີ 16 ພະຈິກ 2007.

ລັດຖະມົນຕີ ວ່າການ ກະຊວງ ສາທາລະນະສຸກ ແຫ່ງ ສປປ ລາວ ອອກ ຂໍ້ຕົກລົງ:

**ມາດຕາ 1**

1. ສະຖາບັນ ປັດສະເຕີ ລາວ, ເຊິ່ງ ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍ ອີງຕາມດຳລັດ ຂອງ ນາຍົກ ລັດຖະມົນຕີ ເລກທີ. 402/ນຍ ລົງວັນທີ 16 ພະຈິກ 2007, ເຊິ່ງ ມີໜ້າທີ່ ໃຫ້ບໍລິການ ສາທາລະນະຊົນ ດັ່ງທີ່ໄດ້ ນິຍາມໄວ້ ໃນ ມາດຕາ 2 ຂອງ ຂໍ້ ຕົກລົງ ສະບັບນີ້. ສະຖາບັນ ປັດສະເຕີ ລາວ ແມ່ນ ອົງການຈັດຕັ້ງທີ່ບໍ່ຫວັງຜົນ ກຳໄລ, ມີ ຖານະ ນິຕິບຸກຄົນ ແລະ ຄຸນນະທຳ.

2. ໂດຍສອດຄ່ອງ ກັບ ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ. 402/ນຍ ລົງວັນທີ 16 ພະຈິກ 2007 ວ່າດ້ວຍ ການສ້າງຕັ້ງ ສະຖາບັນ ປັດສະເຕີ ລາວ, ຂໍ້ຕົກລົງ ສະບັບນີ້ ກຳນົດ ບັນດາ ຫຼັກການ ລວມ ກ່ຽວກັບ ພາລະໜ້າທີ່, ສິດອຳນາດ, ການຈັດຕັ້ງບໍລິຫານ, ລະບົບ ແລະ ແບບ ການເຮັດວຽກ ຂອງ ສະຖາບັນ ປັດສະເຕີ ລາວ. ບັນດາຫຼັກການ ເຫຼົ່ານີ້ ປະກອບມີ ເປັນຕົ້ນແມ່ນ ບັນດາຫຼັກ ການ ແຫ່ງ ຄວາມເປັນເຈົ້າຕົນເອງ ດ້ານວິທະຍາສາດ, ດ້ານບໍລິຫານ ແລະ ດ້ານ ການເງິນ.

### ມາດຕາ 2

ໃນ ການສ້າງຕັ້ງ ສະຖາບັນ ປັດສະເຕີ ລາວ, ພາລະໜ້າທີ່ ຕໍ່ໄປນີ້ ໄດ້ຖືກມອບໝາຍ ໃຫ້ ສະຖາບັນ ປັດສະເຕີ ລາວ:

ກ. ພັດທະນາ ແລະ ຄຸ້ມຄອງການຄົ້ນຄວ້າ ວິທະຍາສາດ ແລະ ການແພດ ໂດຍສະເພາະແມ່ນ ຈຸລະໂລກວິທະຍາ ໂດຍເອົາຈຸລະໂລກ ທີ່ເປັນສາເຫດ ຂອງ ພະຍາດທີ່ເກີດຂຶ້ນໃໝ່ເປັນບຸລິມະສິດ ຈຸລະຊີວະວິທະຍາ, ການສຶກສາຄົ້ນຄວ້າ ພະຍາດທີ່ມີພາຫະນຳສິ່ງເຊື້ອ ເຊັ່ນ ພະຍາດໄຂ້ເລືອດອອກ ແລະ ພະຍາດສະໝອງອັກເສບ ແລະ ການຄົ້ນຄວ້າ ພາກສະໜາມດ້ານລະບາດວິທະຍາ;

ຂ. ປະກອບສ່ວນເຂົ້າໃນການວາງນະໂຍບາຍ ດ້ານ ສາທາລະນະສຸກ ຂອງ ສປປ ລາວໂດຍສະເພາະສະໜອງການຊ່ວຍເຫລືອ ດ້ານເຕັກນິກ ອັນເປັນປະໂຫຍດທີ່ສຸດ ຕໍ່ ສູນ ວິເຄາະ ແລະ ລະບາດວິທະຍາ ແຫ່ງຊາດ ເທົ່າທີ່ເຮັດໄດ້ ໃນການສຳຫລວດ ການເກີດຂຶ້ນໃໝ່ ແລະ ລະບາດວິທະຍາ ພາກສະໜາມ;

ຄ. ພັດທະນາ ແລະ ຄຸ້ມຄອງ ການສຶກສາອົບຮົມ ໃນດ້ານວິທະຍາສາດ ແລະ ການແພດ ໂດຍສະເພາະ ແມ່ນການສຶກສາອົບຮົມຂັ້ນຕົ້ນ ແລະ ຕໍ່ເນື່ອງ ແລະ ເຂົ້າຮ່ວມ ການສຶກສາອົບຮົມຕ່າງໆໃນລະດັບສາກົນ, ໂດຍສະເພາະຢ່າງຍິ່ງ ແມ່ນຜ່ານ ເຄືອຂ່າຍສາກົນ ຂອງບັນດາ ສະຖາບັນ ປັດສະເຕີ.

### ມາດຕາ 3

ການຄົ້ນຄ້ວາ ຕັດສິນບັນຫາ ແລະ ບໍລິຫານ ຂອງ ສະຖາບັນ ປັດສະເຕີ ລາວ ແມ່ນອີງໃສ່ ບັນດາຫຼັກການພື້ນຖານຕໍ່ໄປນີ້:

ກ. ຄະນະຊີ້ນຳ ຂອງ ສະຖາບັນປັດສະເຕີ ລາວ ປະກອບດ້ວຍສະພາບໍລິຫານ, ເຊິ່ງມີ ໜ້າທີ່ ຊີ້ນຳ ແລະ ຄຸ້ມຄອງບໍລິຫານທົ່ວໄປ ສະຖາບັນ ປັດສະເຕີ ລາວ ແລະ ຜູ້ອຳນວຍການໃຫຍ່ ເຊິ່ງ ມີ ໜ້າທີ່ ປະຕິບັດ ມະຕິຕົກລົງ ຂອງ ສະພາບໍລິຫານ ລວມທັງ ການ ຄຸ້ມຄອງ ບໍລິຫານປະຈຳວັນ, ເຊິ່ງ ລວມເຂົ້າໃນຄະນະຊີ້ນຳ ມີ ສະ

ພາວິທະຍາສາດ ເຊິ່ງມີໜ້າທີ່ດຳເນີນການຕິດຕາມ ແລະ ປະເມີນຜົນ ບັນດາ ໂຄງການ ແລະ ການເຄື່ອນໄຫວຕ່າງໆ ທາງດ້ານວິທະຍາສາດ.

ຂ. ປະທານສະພາບໍລິຫານ ແມ່ນ ລັດຖະມົນຕີ ວ່າການ ກະຊວງ ສາທາລະນະສຸກ ໂດຍຕຳ ແໜ່ງ.

### ມາດຕາ 4

ຊັບສິນບັດ ແລະ ການເງິນ ຂອງ ສະຖາບັນ ປັດສະເຕີ ລາວ ແມ່ນ ຖືກຄຸ້ມຄອງ ໂດຍ ບັນດາຫຼັກ ການພື້ນຖານ ຕໍ່ໄປນີ້:

ກ. ຄວາມ ເປັນເຈົ້າຕົນເອງ ທາງດ້ານງົບປະມານ ແລະ ການເງິນ ຕາມທີ່ໄດ້ ກຳນົດ ໄວ້ໃນ ມາດຕາ 1 ໝາຍເຖິງວ່າ ສະຖາບັນ ປັດສະເຕີ ລາວ ມີ ຊັບພະຍາກອນ ທຶນ ແລະ ຊັບສິນ ເປັນ ຂອງ ຕົນເອງ.

ຂ. ສະຖາບັນ ປັດສະເຕີ ລາວ ແລະ ຜູ້ບໍລິຈາກ ຂອງ ສະຖາບັນດັ່ງກ່າວ ລວມທັງ ສະຖາບັນ ປັດສະເຕີ, ແລະ ບຸກຄະລາກອນ ຕ່າງປະເທດ ຂອງ ສະຖາບັນດັ່ງ ກ່າວ ຈະໄດ້ຮັບ ການຍົກເວັ້ນ ພາສີອາກອນ ເທົ່າທີ່ເປັນໄປໄດ້ ຕາມທີ່ ອະນຸຍາດ ໂດຍ ກົດໝາຍ ວ່າດ້ວຍ ພາສີ ແລະ ກົດໝາຍ ວ່າດ້ວຍ ສ່ວຍສາອາກອນ ຂອງ ສປປ ລາວ, ກ່ຽວກັບ ການປະ ກອບສ່ວນ ແລະ ທຸລະກຳ ຂອງ ພວກກ່ຽວ ເພື່ອເຮັດໃຫ້ ພາລະກິດ ແລະ ການ ເຄື່ອນໄຫວ ຂອງ ສະ ຖາບັນ ປັດສະເຕີ ລາວ ປະກົດຜົນເປັນຈິງ, ການຍົກເວັ້ນດັ່ງກ່າວ ເປັນຕົ້ນ ປະກອບມີ:

(i) ການຍົກເວັ້ນ ອາກອນລາຍໄດ້ ສຳລັບ ທຸກການປະກອບສ່ວນ ຂອງ ຜູ້ບໍ ລິຈາກ;

(ii) ການຍົກເວັ້ນ ພາສີ ສຳລັບ ທຸກການນຳເຂົ້າ ວັດຖຸ ອຸປະກອນ ທີ່ ກ່ຽວກັບ ວຽກງານ ແລະ ການເຄື່ອນໄຫວ ຂອງ ສະຖາບັນ ປັດສະເຕີ ລາວ;

(iii) ການຍົກເວັ້ນ ອາກອນລາຍໄດ້ ສຳລັບ ເງິນເດືອນ ຂອງ ບຸກຄະລາກອນ ຕ່າງປະເທດ;

(iv) ການຍົກເວັ້ນ ພາສີ ສຳລັບ ເຄື່ອງຂອງ ສ່ວນຕົວ ທີ່ນຳເຂົ້າມາ ສປປ ລາວ ໃນໄລຍະ ປະຕິບັດໜ້າທີ່ ຂອງ ບຸກຄະລາກອນ ຕ່າງປະເທດ.

### ມາດຕາ 5

ກົດລະບຽບ ຂອງ ສະຖາບັນ ປັດສະເຕີ ລາວ ແມ່ນ ສອດຄ່ອງ ກັບ ບັນດາຫຼັກການ ລວມ ກ່ຽວກັບ ພາລະໜ້າທີ່, ບົດບາດ, ສິດອຳນາດ, ການຈັດຕັ້ງບໍລິຫານ, ລະບົບ ແລະ ແບບ ການເຮັດວຽກ ທີ່ ໄດ້ກຳນົດໄວ້ ໃນ ຂໍ້ຕົກລົງສະບັບນີ້ ແລະ ດັ່ງນັ້ນ ໄດ້ຮັບການຮັບຮອງເອົາ. ເນື້ອໃນ ຂອງ ກົດລະ ບຽບດັ່ງກ່າວ ມີຢູ່ໃນ ເອກະສານຊ້ອນທ້າຍ ຂອງ ຂໍ້ຕົກລົງສະບັບນີ້.

**ມາດຕາ 6**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ ວ່າການ ກະຊວງ ສາທາລະນະສຸກ ແຫ່ງ ສປປ ລາວ

ດຣ. ປອນເມກ ດາລາລອຍ